VILLAGE FOCUS INTERNATIONAL

*Investing in local leaders to create global change*

# ປະກາດຮັບສະໝັກພະນັກງານ

ອົງການບ້ານຈຸດສຸມສາກົນເປັນອົງການຈັດຕັ້ງສາກົນປະຈຳ ສ ປປ ລາວ. ປະຈຸບັນຈະໄດ້ຈັດຕັ້ງປະຕິບັດໂຄງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດຖະບານ, ອົງການຈັດຕັ້ງທາງສັງຄົມໃນຂັ້ນທອງຖິ່ນໃນການເຮັດວຽກຊ່ວຍເຫຼືອ ໄວໜຸ່ມ ແລະ ແຮງງານເຄື່ອນຍ້າຍ ຜູ້ທີ່ມີຄວາມສ່ຽງທີ່ຈະຖືກເຄາະຮ້າຍຂອງການຄ້າມະນຸດ. ມີຄວາມຕ້ອງການພະນັກງານຈຳນວນ 2 ຕຳແໜ່ງ. ຕຳແໜ່ງດັ່ງກ່າວແມ່ນຈະປະຈຳຢູ່ແຂວງ ສາລະວັນ

1. <u>ພະນັກງານວິຊາການ/ນັກສັງຄົມສົງເຄາະ</u>

   *ໜ້າທີ່ຮັບຜິດຊອບ*

   - ປະສານງານກັບພາກລັດຖະບານເພື່ອຈັດກອງປະຊຸມ, ຝຶກອົບຮົມ ແລະ ກິດຈະກຳຂອງໂຄງການ
   - ສ້າງແຜນກິດຈະກຳ ແລະ ແຜນໃຊ້ຈ່າຍກ່ຽວກັບກິດຈະກຳໂດຍອີງໃສ່ແຜນຂອງໂຄງການ
   - ຈັດກອງປະຊຸມ, ຝຶກອົບຮົມ ແລະ ກິດຈະກຳຂອງໂຄງການ
   - ລົງເກັບກຳຂໍ້ມູນຄອບຄົວ ແລະ ຊຸມຊົນ ໂດຍອີງຕາມແຜນຂອງໂຄງການ
   - ເຮັດບົດບັນທຶກກອງປະຊຸມ, ຝຶກອົບຮົມ ແລະ ລາຍງານກິດຈະກຳເພື່ອສົ່ງໃຫ້ຫົວໜ້າແຜນງານ
   - ຊ່ວຍຜູ້ປະສານງານແຜນງານໃນການເປັນຄູຝຶກໃນການຝຶກອົບຮົມຕ່າງໆ

   *ຄຸນນະວຸດ ແລະ ປະສົບການ*

- ຈົບປະລິນຍາຕີທີ່ກ່ຽວຂອ້ງກັບການພັດທະນາ, ສັງຄົມສົງເຄາະ, ກົດໝາຍ ຫຼື ວິຊາອື່ນໆທີ່ກ່ຽວຂ້ອງ
- ມີປະສົບການໃນການເຮັດວຽກກ່ຽວກັບການຄ້າມະນຸດ, ການເຄື່ອນຍ້າຍແຮງງານ ແລະ ບົດບາດຍິງຊາຍ, ການໃຊ້ຄວາມຮຸນແຮງປະເດັນທີ່ກ່ຽວຂ້ອງຢ່າງໜ້ອຍ 3 - 5 ປີ
- ເຕັມໃຈ ແລະມັກທີ່ຈະເຮັດວຽກໃນການຊ່ວຍເຫລືອຜູ້ເຄາະຮ້າຍຈາກການຄ້າມະນຸດ ແລະ ແຮງງານເຄື່ອນຍ້າຍ
- ສາມາດຕິດຕໍ່ພົວພັນ ສື່ສານ ກັບພາກລັດ ແລະ ອົງການຈັດຕັ້ງສາກົນອື່ນໆທີ່ກ່ຽວຂ້ອງກັບໂຄງການເປັນຢ່າງດີ
- ສາມາດນຳໃຊ້ພາສາອັງກິດໄດ້ດີ ຈະພິຈາລະນາເປັນພິເສດ
- ເຕັມໃຈ ແລະ ມັກໃນການເຮັດວຽກເປັນທີມ ແລະ ສາມາດປັບຕົວເຂົ້າເຂົ້າກັບສະຖານນະການ

ທ່ານໃດມີຄວາມສົນໃຈຢາກສະໝັກຕຳແໜ່ງນີ້ ສາມາດສົ່ງຈົດໝາຍສະໝັກງານ, ຊີວະປະຫວັດຫຍໍ້ ມາທີ່ອົງການບ້ານຈຸດສຸມສາກົນ ໂທຣ 021 - 312519. Email: kongseng@villagefocus.org. ໝົດກຳນົດວັນທີ 20 /04/ 2022.

<u>Lao Address</u>: PO Box 4697, Ban Phonsavan Tai, Unit 14, House #207, Sisattanak District, Vientiane, Lao PDR / Tel: +856 (0) 21 312519 / Fax: +856 (0) 21 315841 /
<u>US Address</u>: 257 Westover Alley, Asheville, NC 28801 / 1 828 407 4276 /rickr@villagefocus.org / www.villagefocus.org